ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 2140 /ຫອຄ.ກຫຄວ

ນະຄອນຫຼວງວຽງຈັນ, ວັນທີ 03 ຕຸລາ 2019

ກະຊວງອຸດສາຫະກຳແລະການຄ້າ
ກົມການຄ້າຂາເຂົ້າແລະຂາອອກ
ຂາເຂົ້າ ເລກທີ 4572
ວັນທີ 04 OCT 2019

# ແຈ້ງການ

ເຖິງ: ປະຊາຊົນບັນດາເຜົ່າ ຫລື ຜູ້ລົງທຶນ (ພາຍໃນ ແລະ ຕ່າງປະເທດ) ທີ່ຂຶ້ນທະບຽນສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ

ເລື່ອງ: ການຄວັດຕາປະທັບວິສາຫະກິດ

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ, ສະບັບປັບປຸງ - 2013 ;
- ອີງຕາມ ຄຳສັ່ງ, ສະບັບເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018, ວ່າດ້ວຍການປັບປຸງລະບຽບການ ແລະ ກົນໄກການປະສານງານໃນການດຳເນີນທຸລະກິດ ຢູ່ ສປປ ລາວ ;
- ອີງຕາມ ແຈ້ງການ, ສະບັບເລກທີ 1659/ຫສນຍ, ລົງວັນທີ 23 ກັນຍາ 2019, ເລື່ອງ: ທິດຊີ້ນຳ ກ່ຽວກັບການຄວັດຕາປະທັບ ຂອງກະຊວງປ້ອງກັນຄວາມສະຫງົບ.

ເພື່ອປະກອບສ່ວນສ້າງບັນຍາກາດການເລີ່ມຕົ້ນທຸລະກິດ ໃຫ້ມີຄວາມສະດວກ ວ່ອງໄວ, ຫ້ອງການ, ກະຊວງອຸດສາຫະກຳ ແລະການຄ້າ ແຈ້ງມາຍັງປະຊາຊົນບັນດາເຜົ່າ ຫລືຜູ້ລົງທຶນ (ພາຍໃນ ແລະຕ່າງປະເທດ) ທີ່ຂຶ້ນທະບຽນສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ວິສາຫະກິດ ສາມາດນຳເອົາໃບທະບຽນວິສາຫະກິດ ໄປຍື່ນຂໍຄວັດຕາປະທັບ ນຳຂະແໜງການປ້ອງກັນຄວາມສະຫງົບ ຕາມທີ່ບົ່ງໄວ້ໃນມາດຕາ 21(ໃໝ່) ຂອງກົດໝາຍວ່າດ້ວຍວິສາຫະກິດ - 2013;

2. ວິສາຫະກິດ ຈະໄດ້ຮັບຕາປະທັບ ແລະ ໃບອະນຸຍາດນຳໃຊ້ຕາປະທັບ ພາຍໃນກຳນົດ ຫ້າວັນລັດຖະການ ນັບແຕ່ວັນທີ່ວິສາຫະກິດ ນຳເອົາໃບທະບຽນວິສາຫະກິດ ໄປຍື່ນຂໍຄວັດຕາປະທັບ ເປັນຕົ້ນໄປ;

3. ແຈ້ງການ ສະບັບນີ້ ປ່ຽນແທນແຈ້ງການ, ສະບັບເລກທີ 1412/ຫອຄ.ກຫຄວ, ລົງວັນທີ 12 ກໍລະກົດ 2019, ເລື່ອງ : ການຄວັດຕາປະທັບວິສາຫະກິດແບບສະໝັກໃຈ ຫລື ແບບບໍ່ບັງຄັບ

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຫົວໜ້າຫ້ອງການ

ທ.ບານສະຕິ ເທບພະວົງ

ບ່ອນສົ່ງ:

- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ;
- ຫ້ອງການ, ກະຊວງປ້ອງກັນຄວາມສະຫງົບ;
- ພາກສ່ວນຕ່າງໆທີ່ກ່ຽວຂ້ອງ